## ລາງວັນຣາມອນແມັກໄຊໄຊປີ 2005 ສາຂາຜູ້ນຳພາຊຸມຊົນ

## (The 2005 Ramon Magsaysay Award for Community Leadership)

**ແຈ້ງການຊົມເຊີຍສຳລັບ ສົມບັດ ສົມພອນ**

*ບົດນຳສະເໜີພິທີຮັບລາງວັນຣາມອນແມັກໄຊໄຊ*
*ຄັ້ງວັນທີ 31 ສິງຫາ 2005, ມະນິລາ, ປະເທດຟີລິບປິນ*

ປະເທດລາວເປັນປະເທດນ້ອຍໆ ທີ່ບໍ່ມີຊາຍແດນຕິດກັບທະເລ ເປັນໜຶ່ງໃນບັນດາປະເທດທຸກຍາກ ທີ່ສຸດໃນໂລກ. ບໍ່ດົນມານີ້ທີ່ສົງຄາມ ແລະ ການປະຕິວັດໄດ້ສົ່ງຜົນໃຫ້ນັກປັນຍາຊົນຫຼາຍຄົນຕ້ອງໄດ້ ອົບພະຍົບໜີອອກຈາກປະເທດ. ໃນປັດຈຸບັນກໍເຊັ່ນກັນ, ຜ່ານໄປແລ້ວ 30 ປີທີ່ໄດ້ມີການສ້າງຕັ້ງປະເທດ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ຕັ້ງແຕ່ປີ 1975, ເຫັນວ່າໂຄງລ່າງ, ອຸດສາຫະກຳ, ການ ໃຫ້ບໍລິການສາທາລະນະຍັງຄົງຢູ່ໃນຂັ້ນພື້ນຖານ. ປະຊາຊົນຫຼາຍກວ່າເຄິ່ງໜຶ່ງຂອງປະເທດ ແມ່ນຢູ່ໃນ ຊ່ວງໄວໜຸ່ມສາວ ແລະມີໂອກາດພຽງເລັກນ້ອຍສຳລັບພວກເຂົາເຫຼົ່ານັ້ນ ທີ່ມີຈຳນວນສາມລ້ານຄົນ. ບັນຫາ ສັງຄົມມີເພີ່ມຂຶ້ນເລື້ອຍໆ ແລະ ພວກເຂົາຫຼາຍຄົນເດີນທາງອອກໄປອາໃສຢູ່ຕ່າງປະເທດເພື່ອ ຊອກຫາວິຖີຊີວິດທີ່ດີກວ່າ. ແນວໃດກໍດີ ໄວໜຸ່ມເຫຼົ່ານີ້ແມ່ນຄວາມຫວັງ ສູງສຸດຂອງປະເທດ, ສົມບັດ ສົມພອນໄດ້ ກ່າວໄວ້. ໃນຖານະຜູ້ບໍລິຫານສູນອົບຮົມຮ່ວມພັດທະນາ (ປາແດກ) ໃນນະຄອນຫຼວງ ວຽງຈັນ, ລາວກຳລັງ ຊ່ວຍກຽມຄວາມພ້ອມໃຫ້ໄວໜຸ່ມໃຫ້ສາມາດສ້າງອະນາຄົດທີ່ດີກວ່າເກົ່າໃຫ້ແກ່ ປະເທດລາວ.

ຊີວິດໃນໄວເດັກຂອງ ສົມບັດ ສົມພອນ ຢູ່ທ່າມກາງຄວາມບໍ່ແນ່ນອນແລະຄວາມສັບສົນວຸ້ນວາຍຍ້ອນ ປະເທດລາວໃນຕອນນັ້ນໄດ້ຖືກຣຸກຮານຈາກສົງຄາມອິນດູຈີນ. ສົມບັດລອດພົ້ນອອກຈາກເຫດການເຫຼົ່າ ນັ້ນໄດ້ຍ້ອນສອບເສັງຍາດໄດ້ທຶນການສຶກສາເພື່ອໄປຮຽນຢູ່ມະຫາວິທະຍາໄລຮາວາຍ (University of Hawaii) ແລະໄດ້ຮັບໃບປະກາດໃນດ້ານການສຶກສາແລະດ້ານກະສິກຳ. ໃນປີ 1980 ສົມບັດໄດ້ກັບໄປ ບ້ານເກີດຂອງຕົນເອງອີກຄັ້ງໜຶ່ງ ແລະ ໃນປີດຽວກັນໄດ້ຊ່ວຍຈັດຕັ້ງໂຄງການການປູກເຂົ້າແບບປະສົມ ປະສານ (Rice-Based Integrated Farm System Project) ເພື່ອຊ່ວຍໃຫ້ຊາວນາບັນລຸ ຄວາມໝັ້ນຄົງ ດ້ານອາຫານ. ຫຼາຍປີຕໍ່ມາໄດ້ເຮັດໃຫ້ ສົມບັດກ້າວເຂົ້າສູ່ໂລກຂອງຊົນນະບົດໃນລາວ ແລະ ສູ່ອຸປະສັກທີ່ ສະຫຼັບຊັບຊ້ອນໃນໝູ່ບ້ານທີ່ກະຈັດກະຈາຍໃນເຂດຫ່າງໄກສອກຫຼີກ ທີ່ກຳລັງລໍຖ້າ ນັກພັດທະນາທັງຫຼາຍເຂົ້າໄປຫາ.

ຈາກບົດຮຽນເຫຼົ່ານັ້ນ, ສົມບັດໄດ້ກໍ່ຕັ້ງສູນອົບຮົມຮ່ວມພັດທະນາ (PADETC ຫຼື ປາແດກ) ໃນປີ 1996 ເພື່ອສົ່ງເສີມຄວາມຍືນຍົງ, ຄວາມສະເໝີພາບ, ແລະ ການພັດທະນາແບບເພິ່ງຕົນເອງໃນລາວ. ຈົນເຖິງປັດຈຸບັນອົງການດັ່ງກ່າວເປັນພຽງອົງການພາກເອກະຊົນດຽວທີ່ເປັນທີ່ຮັບຮູ້ໃນປະເທດລາວ. ສົມບັດໄດ້ນຳພາອົງການໂດຍສຸມໃສ່ເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ການສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ເພື່ອການສຶກສາໂດຍການນຳສະເໜີວິທີການຜະລິດເຕົາປະຫຍັດຖ່ານທີ່ຊ່ວຍຫຼຸດຜ່ອນເວລາສຳລັບແມ່ຍິງໃນການໄປຕັດຟືນດັງໄຟ; ໂດຍການສົ່ງເສີມການຜະລິດຝຸ່ນຊີວະພາບໂດຍທ້ອງຖິ່ນເພື່ອເປັນທາງເລືອກທົດແທນການນຳເຂົ້າ

ຝຸ່ນເຄມີຈາກຕ່າງປະເທດ; ຄົ້ນຄິດ ວິທີການຜະລິດໃໝ່ໆແລະ ກົນລະຍຸດທາງການຕະຫຼາດສຳລັບທຸລະກິດຂະໜາດນ້ອຍ ເຊັ່ນ ຊາໃບມອນ ແລະ ເຂົ້າກ້ອງຊີວະພາບ ແລະ ກ້ວຍຕາກແສງຕາເວັນ, ໝາກບັດ ແລະ ໝາກໄມ້ຕາກແຫ້ງຕ່າງໆ; ໂດຍການສ້າງຕັ້ງລະບົບການຈັດການຂີ້ເຫຍື້ອໃນນະຄອນຫຼວງວຽງຈັນ; ແລະ ໂດຍການຈັດໃຫ້ມີກິດຈະກຳເສີມນອກໂມງຮຽນທີ່ມ່ວນຊື່ນສຳລັບເດັກ. ມາຮອດປັດຈຸບັນ, ອົງການປາແດກກຳລັງອອກແບບບົດສອນທີ່ເນັ້ນເດັກເປັນໃຈກາງສຳລັບໂຮງຮຽນປະຖົມສຶກສາ.

ແນວໃດກໍ່ດີ ສົມບັດໄດ້ ຍົກລະດັບຄວາມອາດສາມາດພະນັກງານປະຈຳຈຳນວນ 43 ຄົນ ແລະ ວຽກງານສ່ວນຫຼາຍແມ່ນ ຈັດຕັ້ງປະຕິບັດໂດຍອາສາສະໝັກໄວໜຸ່ມ ແລະຄູເຝິກທີ່ມີເປັນຕົວແບບໃນ ດ້ານການຮຽນຮູ້ແບບມີສ່ວນຮ່ວມ. ໃນອີກບໍ່ດົນຕໍ່ໜ້າ ອາສາສະໝັກແລະຄູເຝິກກໍ່ຈະເຂົ້າເຖິງຄົນອີກ ຈຳນວນຫຼາຍ ເຖິງ 9,000 ຄົນ ແລະ ເມື່ອເປັນແນວນັ້ນ, ສົມບັດ ຈະປະກັນຄຸນນະພາບວ່າພວກເຂົາ ທັງຫຼາຍຈະຮຽນຮູ້ທັກສະການຄົ້ນຄິດ, ການວາງແຜນ, ການປະພຶດຕົວ, ແລະ ການເປັນຜູ້ນຳພາທີ່ດີ.

*"ອາສາສະໝັກໃນຊ່ວງທ້າຍອາທິດ"* ຂອງອົງການປາແດກ ເຊິ່ງແມ່ນກຸ່ມນັກຮຽນລະດັບມັດທະຍົມປາຍ, ໄດ້ເຮັດກິດຈະກຳເຊັ່ນ: ນຳພານັກຮຽນຮຸ່ນນ້ອຍໃນການຮຽນຮູ້ໂດຍຜ່ານເກມ ແລະ ກິດຈະກຳມ່ວນຊື່ນຕ່າງໆ ແລະ ການແຕ່ງປຶ້ມອ່ານສຳລັບເດັກ ແລະ ບົດລະຄອນ; ພ້ອມດຽວກັນ, ຄູເຝິກໄດ້ຝຶກໃຫ້ພວກເຂົາມີທັກສະການເປັນຜູ້ນຳພາ, ການເຮັດວຽກຮ່ວມກັນເປັນໝູ່ຄະນະ, ແລະ ຈິດສຳນຶກເລື່ອງສິດສະເໝີພາບລະຫວ່າງຍິງຊາຍ, ແລະ ຝຶກຝົນພວກເຂົາໃນເລື່ອງການຂຽນ, ການເວົ້າ, ແລະ ການສິດສອນ. ອາສາສະໝັກຂອງປາແດກທີ່ເປັນນັກສຶກສາໃນລະດັບມະຫາວິທະຍາໄລ ມີຊື່ກຸ່ມວ່າ ກຸ່ມມົດຂຽວ, ໄດ້ສົ່ງເສີມອາຫານຊີວະຈິດ, ການແຍກຂີ້ເຫຍື້ອ, ແລະ ການປູກຝັງຈິດສຳນຶກເລື່ອງສິ່ງແວດລ້ອມ ແລະ ໄດ້ຖືກຝຶກຝົນເລື່ອງການເກັບກຳຂໍ້ມູນ, ການຂຽນບົດລາຍງານ,ແລະ ການວາງແຜນ ແລະ ບໍລິຫານໂຄງການ. ຄູຝຶກທີ່ຮຽນຈົບມະຫາໄລແລ້ວແມ່ນຖືກຝຶກຝົນໃນເລື່ອງການລົງເຮັດວຽກຕົວຈິງເພື່ອປູກຈິດສຳນຶກຕໍ່ຕ້ານຢາເສບຕິດ, ການຄ້າມະນຸດ, ໂລກເອດ, ແລະ ການດຳເນີນທຸລະກິດຈຸລະພາກ, ແລະ ໄດ້ຮັບບົດຮຽນຈາກປະສົບການຕົວຈິງຈາກຮາກຖານ. ນອກນັ້ນ ສົມບັດຍັງເນັ້ນສ້າງໃຫ້ອາສາສະໝັກໄວໜຸ່ມຂອງອົງການປາແດກມີຄວາມເຂົ້າໃຈເລື່ອງສື່ ເຊິ່ງພວກເຂົາໄດ້ຮຽນຮູ້ການນຳໃຊ້ບົດເລື່ອງເພື່ອເຜີຍແຜ່ຄວາມຮູ້ໃຫ້ແກ່ເດັກໃນວົງກວ້າງ ເລື່ອງສຸຂະອານາໄມ, ທັກສະຊີວິດ, ແລະ ການປົກປັກຮັກສາທຳມະຊາດ; ເພື່ອຂຽນ ແລະ ຖ່າຍທອດລາຍການວິທະຍຸທີ່ໄວໜຸ່ມເປັນຜູ້ດຳເນີນເອງ; ແລະ ເພື່ອສ້າງວິດີໂອທີ່ມີປະສິດທິພາບກ່ຽວກັບວິທີການປູກຝັງ  ແລະ ປະເດັນບັນຫາເລັ່ງດ່ວນໃນສັງຄົມ.

ສົມບັດໃນໄວ 54 ປີ ມີຄວາມນອບນ້ອມຖ່ອມຕົນ ອີກທັງມີຄວາມຕັ້ງອົກຕັ້ງໃຈຢ່າງບໍ່ຮູ້ອິດຮູ້ເມື່ອຍເຮັດວຽກເຊື່ອມປະສານຫຼາຍໆໂຄງການໃນສູນປາແດກ. ຄວາມຫວັງຢູ່ທີ່ໄວໜຸ່ມ ປູກຈິດສຳນຶກໃຫ້ພວກເຂົາເຫັນຄຸນຄ່າຂອງມູນເຊື້ອພູມປັນຍາລາວທ່າມກາງກະແສໂລກທີ່ຫຼັ່ງໄຫຼເຂົ້າມາທີ່ໜັກໜ່ວງເພີ່ມຂຶ້ນເລື້ອຍໆ. ການພັດທະນາເປັນເລື່ອງດີ, ສົມບັດບອກຢ້ຳກັບໄວໜຸ່ມ, ແຕ່ການພັດທະນາທີ່ອຸດົມສົມບູນ *"ຕ້ອງອອກມາຈາກພາຍໃນໂຕເອງ."*

ໃນການຄັດເລືອກຜູ້ໄດ້ຮັບລາງວັນ, ສົມບັດ ສົມພອນ ໄດ້ຮັບລາງວັນຣາມອນແມັກໄຊໄຊ ໃນສາຂາຜູ້ນຳພາຊຸມຊົນ, ຄະນະກຳມາທິການຄັດເລືອກໄດ້ຈາລຶກຄວາມມຸ່ງໝັ້ນຕັ້ງໃຈໃນການສົ່ງເສີມການພັດທະນາແບບຍືນຍົງໃນລາວ ໂດຍການຝຶກອົບຮົມ ແລະ ກະຕຸ້ນໃຫ້ແກ່ໄວໜຸ່ມໃຫ້ກາຍເປັນຮຸ່ນໃໝ່ທີ່ມີນ້ຳໃຈຄວາມເປັນເຈົ້າການ.